# ສະຫລຸບຜົນການປຶກສາຫາລືລ່ວງໜ້າທາງການ ຂອງ ໂຄງການພະລັງງານໄຟຟ້ານ້ຳ ຕົກປາກແບ່ງ ໄລຍະ 6 ເດືອນ

**20 ມິຖຸນາ 2017, ນະຄອນຫຼວງວຽງຈັນ**, **ສປປ ລາວ –** ຄະນະກຳມາທິການ ແມ່ນ້ຳຂອງສາກົນ (ຄມສ) ໄດ້ຈັດກອງປະຊຸມ ວາລະພິເສດ ຂອງ ຄະນະກຳມະການຮ່ວມ ຄມສ ກ່ຽວກັບ ໂຄງການພະລັງງານໄຟຟ້ານ້ຳຕົກປາກແບ່ງ ທີ່ ນະຄອນຫຼວງວຽງຈັນ ອັນເປັນຂີດໝາຍ ສະຫລຸບຜົນການດຳເນີນ ຂະບວນການປຶກສາຫາລືລ່ວງໜ້າ ໄລຍະຫົກເດືອນ.

ກອງປະຊຸມຄັ້ງນີ້ ໄດ້ເປີດໂອກາດໃຫ້ ສະມາຊິກຄະນະກຳມະການຮ່ວມ ໄດ້ ປຶກສາຫາລືຢ່າງເປັນທາງການ ກ່ຽວກັບ ຂໍ້ສະເໜີຫຼັກຂອງ ບົດລາຍງານທົບທວນດ້ານວິຊາການ ໂຄງການເຂື່ອນພະລັງງານໄຟຟ້ານ້ຳຕົກປາກແບ່ງ ຂອງ ກອງເລຂາຄະນະກຳມາທິການແມ່ນ້ຳຂອງສາກົນ ພາຍໃນກອບເວລາການປຶກສາຫາລືລ່ວງໜ້າ ທີ່ ກຳນົດໄວ້. ອີງຕາມບົດລາຍງານທົບທວນດ້ານວິຊາການ ແລະ ຜົນທີ່ໄດ້ຮັບຈາກ ກອງປະຊຸມປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ໃນລະດັບຊາດ ແລະ ພາກພື້ນ, ຄະນະກຳມະການຮ່ວມ ໄດ້ຕົກລົງເຫັນດີຕໍ່ຖະແຫຼງການທີ່ ຮຽກຮ້ອງ *'ໃຫ້ລັດຖະບານ ສປປ ລາວ ພະຍາຍາມ ແກ້ໄຂຢ່າງສົມເຫດສົມຜົນ ຜົນກະທົບຂ້າມຜ່ານຊາຍແດນຮ້າຍແຮງທີ່ອາດເກີດຂຶ້ນ ຍ້ອນ ໂຄງການ ປາກແບ່ງ'* ແລະ ສະເໜີໃຫ້ກອງເລຂາກະກຽມ ແຜນດຳເນີນງານຮ່ວມກັນ ຊຶ່ງຈະກຳນົດວຽກງານພາຍຫຼັງ ການສິ້ນສຸດ ຂະບວນການປຶກສາຫາລືລ່ວງໜ້າ ໄລຍະຫົກເດືອນນີ້.

ມາດຕະການ ທີ່ສະເໜີເພື່ອນຳໄປພິຈາລະນາ ໃນຖະແຫຼງການຮ່ວມລວມມີ: ການແກ້ໄຂຜົນກະທົບທາງດ້ານອຸທົກກະສາດ ແລະ ຊົນລະສາດ ໃນຕອນເທິງ ແລະ ຕອນລຸ່ມຂອງແມ່ນ້ຳ ທີ່ອາດເກີດຂຶ້ນ ລວມທັງ ການໄຫຼຄືນຂອງນ້ຳເຂົ້າໄປໃນເຂດຂອງ ປະເທດໄທ; ປັບປຸງການໄຫຼຂອງຕະກອນ; ປັບປຸງ ເສັ້ນທາງການເຄື່ອນຍ້າຍຂອງ ປາ ລະຫວ່າງຕອນເທິງ ແລະ ຕອນລຸ່ມຂອງແມ່ນ້ຳ; ປັບປຸງຄວາມເຂົ້າໃຈກ່ຽວກັບ ຜົນກະທົບທາງເສດຖະກິດ-ສັງຄົມຂ້າມຜ່ານຊາຍແດນ; ຮັບປະກັນເສລີພາບການເດີນເຮືອ; ການສ້າງກົນໄກການແລກປ່ຽນຂໍ້ມູນ ແລະ ປະກອບຄວາມເຫັນ ກ່ຽວກັບ ການອອກແບບ ແລະ ການພັດທະນາໂຄງການ, ປັບປຸງການແລກປ່ຽນຂໍ້ມູນການອອກແບບ ແລະ ຕິດຕາມໂຄງການ ກໍຄື ແຜນງານຕິດຕາມໂຄງການປາກແບ່ງຮ່ວມກັນ ຂອງ ຄມສ.

ສະມາຊິກ ຄະນະກຳມະການຮ່ວມ ໄດ້ຮັບຮູ້ກ່ຽວກັບ ຂໍ້ສະເໜີຫຼັກ ຈາກ ກອງປະຊຸມປຶກສາຫາລືກັບຜູ້ມີສ່ວນຮ່ວມ ລະດັບພາກພື້ນ ທັງສອງຄັ້ງ ທີ່ຈັດໂດຍກອງເລຂາ ຄມສ ແລະ ການປຶກສາຫາລືລະດັບຊາດ ຊຶ່ງໄດ້ປະກອບເຂົ້າໃນ 'ແບບຟອມການຕອບ' ທີ່ຍື່ນໂດຍ ບັນດາປະເທດສະມາຊິກຜູ້ໄດ້ຖືກແຈ້ງ. ຄະນະກຳມະການຮ່ວມ ຍັງໄດ້ຮັບຮູ້ຈິດໃຈການຮ່ວມມື ແລະ ຄວາມຮັບຜິດຊອບ ຂອງ ສປປ ລາວ ໃນການຈັດຕັ້ງ

ປະຕິບັດລະບຽບການແຈ້ງໃຫ້ຊາບ, ປຶກສາຫາລືລ່ວງໜ້າ ແລະ ການຕົກລົງ ຕໍ່ກັບ ໂຄງການ ເຂື່ອນໄຟຟ້າພະລັງງານນ້ຳຕົກປາກແບ່ງ.

ຖະແຫຼງການຂອງ ຄະນະກຳມະການຮ່ວມ, ແບບຟອມການຕອບ ແລະ ຖະແຫຼງການ ຂອງ ສປປ ລາວ ຈະໄດ້ມີການເຜີຍແຜ່ໃຫ້ກັບມະຫາຊົນ ພາຍໃນອາທິດນີ້.

ການປຶກສາຫາລືລ່ວງໜ້າ ກ່ຽວກັບ ໂຄງການພະລັງງານໄຟຟ້ານ້ຳຕົກປາກແບ່ງ ໄດ້ເລີ່ມຕົ້ນຢ່າງເປັນທາງການໃນວັນທີ 20 ທັນວາ 2016. ດັ່ງທີ່ໄດ້ກຳນົດໄວ້ ໃນສັນຍາແມ່ນ້ຳຂອງ ປີ 1995, ເຊິ່ງສຸມໃສ່ການຫລຸດຜ່ອນ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຊີວິດການເປັນຢູ່ຂອງ ຊຸມຊົນທີ່ອາໄສຢູ່ຕາມແຄມແມ່ນ້ຳ ທັງເຂດຕອນເທິງ ແລະ ຕອນລຸ່ມ ຂອງ ແມ່ນ້ຳ ພ້ອມທັງ ການນຳໃຊ້ຊັບພະຍາກອນນ້ຳໄດ້ຢ່າງຄຸ້ມຄ່າທີ່ສຸດ.

ຂໍ້ມູນທີ່ກ່ຽວກັບໂຄງການ ລວມທັງ ບົດການປະເມີນຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ, ບົດລາຍງານທາງດ້ານວິສະວະກຳ ແລະ ຄຳເຫັນຕ່າງໆ ແມ່ນສາມາດເຂົ້າເບິ່ງໄດ້ໃນເວບໄຊ້ ຂອງ ຄມສ www.mrcmekong.org.

-ຈົບ-

**ໝາຍເຫດ:**

**ຄະນະກຳມາທິການແມ່ນ້ຳຂອງສາກົນ (ຄມສ)** ແມ່ນອົງການຈັດຕັ້ງລະຫວ່າງລັດຖະບານ ທີສ້າງຕັ້ງຂຶ້ນເພື່ອສົ່ງເສີມການຮ່ວມມື ດ້ານການຄຸ້ມຄອງອ່າງແມ່ນ້ຳຂອງໃຫ້ຍືນຍົງ ເຊິ່ງປະກອບມີ ກຳປູເຈຍ, ສປປ ລາວ, ໄທ ແລະ ສສ ຫວຽດນາມ ເປັນ ສະມາຊິກ. ຄມສ ເຮັດຫນ້າທີ່ເປັນໃຈກາງໃນ ວຽກງານພົວພັນການທູດດ້ານນ້ຳ ແລະ ການຮ່ວມມືພາກພື້ນ ເຊິ່ງບັນດາປະເທດສະມາຊິກ ຈະແບ່ງປັນຜົນປະໂຫຍດຈາກ ການນຳໃຊ້ຊັບພະຍາກອນນ້ຳຮ່ວມກັນ ເຖິງແມ່ນວ່າແຕ່ລະປະເທດຈະມີຄວາມຕ້ອງການທີ່ແຕກຕ່າງກັນກໍຕາມ ກໍຄື ແກ້ໄຂຄວາມກົດດັນ ຈາກຜົນກະທົບຂ້າມຜ່ານຊາຍແດນໃນອ່າງແມ່ນ້ຳຂອງ. ຄມສ ຍັງເຮັດໜ້າທີ່ເປັນ ສູນກາງຄວາມຮູ້ທີ່ສົ່ງເສີມການຮ່ວມມືພາກພື້ນ ແລະ ການວາງນະໂຍບາຍບົນພື້ນຖານວິທະຍາສາດ. ຄມສ ດຳເນີນງານ ປົ່ນອ້ອມ ທຸກຂະແໜງການ ລວມທັງ ການປະມົງທີ່ຍືນຍົງ, ການຫາໂອກາດຂອງວຽກງານກະສິກຳ, ຮັບປະກັນການເດີນເຮືອເສລີ, ການຄຸ້ມຄອງນ້ຳຖ້ວມ ແລະ ຮັກສາລະບົບນິເວດທີ່ສຳຄັນ. ເອົາໃຈໃສ່ບັນຫາຜົນກະທົບໃນອານາຄົດ ຈາກນ້ຳຖ້ວມຮຸນແຮງ, ໄພແຫ້ງແລ້ງຍາວນານ ແລະ ລະດັບນ້ຳທະເລສູງຂຶ້ນເນື່ອງຈາກ ການປ່ຽນແປງດິນຟ້າອາກາດ.

**ໂຄງການພະລັງງານໄຟຟ້ານ້ຳຕົກປາກແບ່ງ** ແມ່ນ ໂຄງການສ້າງເຂື່ອນແບບນ້ຳໄຫຼຜ່ານ ທີ່ຕັ້ງຢູ່ລຳນ້ຳຂອງ. ກຳລັງການຜະລິດ ຂອງໂຄງການ ແມ່ນສາມາດສະໜອງ 912 ເມກາວັດ ແລະ ອອກແບບມາໃຫ້ ມີການປ່ອຍນ້ຳ 5,771.2 ແມັດກ້ອນຕໍ່ວິນາທີ.

ກອງເລຂາຄະນະກຳມະການແມ່ນ້ຳຂອງລາວ ໄດ້ຍື່ນ ບົດລາຍງານແຜນໂຄງການ ຫາ ກອງເລຂາ ຄມສ ໃນວັນທີ 4 ພະຈິກ 2016 ເພື່ອພິຈາລະນາ ແລະ ດຳເນີນການແຈ້ງໃຫ້ຊາບ ຕໍ່ກັບ ປະເທດສະມາຊິກອື່ນໆ ຕາມຂອບເຂດ ແລະ ຂັ້ນຕອນ ການປຶກສາຫາລືລ່ວງໜ້າ.

**ການປຶກສາຫາລືລ່ວງໜ້າ** ແມ່ນ ສວນໜຶ່ງ ຂອງລະບຽບກ່ຽວກັບ ການຮ່ວມມືໃນການນຳໃຊ້ນ້ຳຕາມລຳນ້ຳຂອງ ຄື: ລະບຽບການກ່ຽວກັບການແຈ້ງໃຫ້ຊາບ, ການປຶກສາຫາລືລ່ວງໜ້າ ແລະ ການຕົກລົງ. ອີງຕາມສັນຍາແມ່ນ້ຳຂອງ, ການປຶກສາຫາລືລ່ວງໜ້າ ບໍ່ໄດ້ຮຽກຮ້ອງໃຫ້ມີການຮັບຮອງ ຫຼື ບໍ່ຮັບຮອງໂຄງການໃດໜຶ່ງ ແລະ ກໍບໍ່ແມ່ນການມອບສິດ ແກ່ປະເທດທີ່ແຈ້ງໂຄງການ ສາມາດດຳເນີນໂຄງການໄປໂດຍບໍ່ແຈ້ງໃຫ້ ປະເທດອື່ນຮັບຊາບເສຍກ່ອນ. ລະບຽບການດັ່ງກ່າວແມ່ນ ກົນໄກທເພື່ອສະໜັບສະໜຸນການຮ່ວມມືພາກພື້ນໃນການນຳໃຊ້ນ້ຳ. ລະບຽບການດັ່ງກ່າວ ແມ່ນອອກແບບມາເພື່ອໃຫ້ປະເທດ ທີ່ຖືກແຈ້ງ ສະໜີຄຳເຫັນ ແລະ ໃຫ້ປະເທດທີ່ແຈ້ງໃຫ້ຊາບຍອມຮັບມາດຕະການໃດໜຶ່ງ ເພື່ອບັນເທົາຜົນກະທົບທີ່ອາດຈະເກີດຂຶ້ນ ແລະ ຫາວິທີທາງທີ່ດີກວ່າເກົ່າ ເພື່ອໃຫ້ໄດ້ຜົນປະໂຫຍດຮ່ວມກັນ.

ຄະນະກຳມະການຮ່ວມ ຄມສ ດຳເນີນຂະບວນການປຶກສາຫາລືລ່ວງໜ້າ ໂດຍການສະໜັບສະໜູນ ທາງດ້ານວິຊາການ ແລະ ບໍລິຫານຈາກ ຄະນະສະເພາະກິດ ທີ່ປະກອບມີຜູ່ຕາງໜ້າຈາກປະເທດສະມາຊິກ ແລະ ກອງເລຂາ ຄມສ.

ສຳຫຼັບຂໍ້ມູນເພີ່ມເຕີມ ກ່ຽວກັບລະບຽບການແຈ້ງໃຫ້ຊາບ ການປຶກສາຫາລືລ່ວງໜ້າ ແລະ ການຕົກລົງ, ການປຶກສາຫາລືລ່ວງໜ້າ ໂຄງການພະລັງງານນ້ຳຕົກປາກແບງ, ແລະ ບັນດາເອກະສານໂຄງການ ແມ່ນສາມາດອ່ານໄດ້ທີ່:

http://www.mrcmekong.org/topics/pnpca-prior-consultation/pak-beng-hydropower-project/

**ລາຍລະອຽດເພີ່ມເຕີມ ຕິດຕໍ່ :**

ນາງ ສຸຣິດາຮັກ ສາກົນນິຍົມ, ເຈົ້າໜ້າທີ່ສື່ສານ
ກອງເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ, ນະຄອນຫຼວງວຽງຈັນ, ສປປ ລາວ
souridahak@mrcmekong.org mrcmedia@mrcmekong.org

**ໂທຕັ້ງໂຕະ** +856-21 263 263 **ໂທມືຖື** +856-20 2222 2207